ບ້ານຊາຍ

ການວາງແຜນຮ່ວມກັບຊຸມຊົນ

ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ເມືອງພູກູດ (PICRAIL) ມີຈຸດປະສົງແມ່ນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໂດຍລວມ, ການພັດທະນາຊົນນະບົດ, ແລະ ການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ ໂດຍການເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ ຜ່ານການຜະລິດກະສິກຳສະອາດ, ປອດໄພ, ຍືນຍົງ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ.

ໃນເດືອນ ມີຖຸນາ 2019 ຜ່ານມາ ໂຄງການ PICRAIL ໄດ້ລົງວາງແຜນຮ່ວມກັບປະຊາຊົນບ້ານຊາຍ ເພື່ອສຶກສາຄວາມຕ້ອງການ ແລະ ສ້າງແຜນຈັດຕັ້ງປະຕິບັດຮ່ວມກັບຊຸມຊົນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 20 ຄົນ (ຍິງ 7 ຄົນ) ແລະ ສາມາດສັງລວມຂໍ້ມູນໄດ້ 6 ດ້ານຫຼັກຄື:

ໝາຍເຫດ: ຂໍ້ມູນນີ້ແມ່ນອີງໃສ່ຄວາມຮູ້, ຄວາມເຂົ້າໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ເຊິ່ງອາດຈະຄາດເຄື່ອນຈາກຂໍ້ມູນທາງການ ແຕ່ກໍສະແດງໃຫ້ເຫັນມຸມມອງຂອງຊຸມຊົນກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ ແລະ ການສະເໜີຂອງຊຸມຊົນ

ADRA

german cooperation
DEUTSCHE ZUSAMMENARBEIT

ອົງການ ອາດຣາ (ADRA) ພາຍໃຕ້ໂຄງການ ປັບປຸງກະສິກຳຮອບດ້ານ ເພື່ອປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ການຍົກລະດັບຊີວິດການເປັນຢູ່ຂອງ ປະຊາຊົນ ເມືອງພູກູດ, ແຂວງຊຽງຂວາງ (PICRAIL) ໄດ້ຈັດຕັ້ງປະຕິບັດກິດຈະກຳ ການວາງແຜນແບບມີສ່ວນຮ່ວມກັບຊຸມຊົນ ຈຳນວນ 16 ບ້ານເປົ້າໝາຍ. ຜູ້ເຂົ້າຮ່ວມລວມມີຊາວກະສິກອນ, ອຳນາດການປົກຄອງບ້ານ, ຜູ້ນຳຊຸມຊົນ, ແມ່ຍິງ, ຄອບຄົວຄົນພິການ, ຄອບຄົວແມ່ຮ້າງນາງໝ້າຍ, ຄອບຄົວທຸກຍາກ, ທີມງານໂຄງການ ແລະ ພະນັກງານ-ວິຊາການຈາກຫ້ອງການລັດທີ່ກ່ຽວຂ້ອງ. ການວາງແຜນຮ່ວມກັບຊຸມຊົນຄັ້ງນີ້ເປັນການເກັບຂໍ້ມູນທັງທາງປະລິມານ ແລະ ຄຸນນະພາບ ເພື່ອໃຫ້ມີຄວາມເຂົ້າໃຈກ່ຽວກັບສະພາບ, ບັນຫາ, ຄວາມຕ້ອງການ, ຄວາມປາຖະໜາ, ແລະ ທາງອອກຂອງຊຸມຊົນ ເພື່ອນຳໄປປະກອບເປັນແຜນຈັດຕັ້ງປະຕິບັດໂຄງການ. ກິດຈະກຳນີ້ບໍ່ອາດເປັນໄປໄດ້ຖ້າປາສະຈາກຄູ່ຮ່ວມງານຕ່າງໆ ເຊັ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູກູດ, ໜ່ວຍງານນ້ຳສະອາດ, ຫ້ອງການສະຫະພັນແມ່ຍິງ, ສະມາຄົມຄົນພິການແຫ່ງຊາດລາວ (LDPA), ສະມາຄົມ ພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA), ປະຊາຊົນບ້ານເປົ້າໝາຍ, ແລະ ທີມງານໂຄງການ. ນອກຈາກນີ້ ອົງການ (ADRA) ຂໍຂອບໃຈ ແລະ ສະແດງຄວາມຮູ້ບຸນຄຸນໄປຍັງຜູ້ໃຫ້ທຶນ ກໍຄື BMZ ແລະ ອົງການ ອາດຣາ ເຢຊະມັນ ລວມທັງຄູ່ຮ່ວມງານອື່ນໆສຳລັບການສະໜັບສະໜູນກິດຈະກຳໃນຄັ້ງນີ້ດ້ວຍ.

ບ້ານ ຊາຍ

ທີ່ຕັ້ງບ້ານຊາຍ ເມືອງພູກູດ ແຂວງຊຽງຂວາງ

- ທິດເໜືອຕິດກັບບ້ານປ້ວ
- ທິດໃຕ້ຕິດກັບນ້ຳງື່ມ
- ທິດຕາເວັນອອກຕິດກັບບ້ານພຽງຫຼວງ
- ທິດຕາເວັນຕົກຕິດກັບບ້ານດຸກ

ການຊ່ວຍເຫຼືອ

- ທີ່ຜ່ານມາມີອົງການ/ໂຄງການເຂົ້າມາຊ່ວຍເຫຼືອ ຄື **ມາຍແວັກ** (ນ້ຳລິນ, ຫໍພັກໂຮງຮຽນ), **ADRA** (ສ້ອມແປງນ້ຳລິນ ແລະ ກິດຈະກຳໂພຊະນາການ) ແລະ **UNICEF**

ການນຳໃຊ້ນ້ຳຂອງບ້ານ

- ປະຊາຊົນບ້ານຊາຍນຳໃຊ້ນ້ຳລິນເຂົ້າໃນການດຳລົງຊີວິດ ແຕ່ທີ່ຜ່ານມາແມ່ນມີນ້ຳໃຊ້ບໍ່ພຽງພໍກັບຄວາມຕ້ອງການຂອງຄົນໃນຊຸມຊົນ

ການຄົມມະນາຄົມ

- ໄລຍະທາງຈາກເມືອງພູກູດ ເຖິງບ້ານຊາຍແມ່ນ 15 km.

ຄວາມຈຳເປັນ ແລະ ຂໍ້ຫຍຸ້ງຍາກ

1) ບ້ານມີຫຼາຍຄຸ້ມ ແລະ ຢູ່ຫ່າງໄກກັນ
2) ຄົນພິການພາຍໃນບ້ານຫຼາຍຄົນຍັງຕ້ອງການການເອົາໃຈໃສ່ ແລະ ຊ່ວຍເຫຼືອ
3) ແມ່ຍິງພາຍໃນບ້ານສ່ວນຫຼາຍເຮັດວຽກຫຼາຍໜ້າວຽກເຮັດໃຫ້ບໍ່ມີເວລາເບິ່ງແຍງ ແລະ ພັດທະນາຕົນເອງ
4) ປະຊາຊົນຍັງມີຄວາມຮູ້ຈຳກັດດ້ານການປູກຝັງ ແລະ ລ້ຽງສັດ, ເຕັກນິກການປູກ/ລ້ຽງ. ວິທີປ້ອງກັນພະຍາດ ແລະ ວິທີການຮັບມືກັບບັນຫາທີ່ເກີດຂຶ້ນ.
5) ເຕັກນິກການຕະຫຼາດຍັງຕ່ຳ ແລະ ບໍ່ມີຕະຫຼາດຈຳໜ່າຍຜົນຜະລິດກະສິກຳຢູ່ບໍລິເວນໃກ້ຄຽງ

ຂໍ້ສະເໜີ ຂໍຄວາມຊ່ວຍເຫຼືອ

1) ສະເໜີໃຫ້ທາງໂຄງການຊ່ວຍເຫຼືອຄອບຄົວຄົນພິການ ໃນການສະໜອງທຶນຮອນໃນການລ້ຽງສັດ
2) ສະເໜີໃຫ້ໂຄງການສະໜອງທຶນປູກຝັງ ແລະ ສະໜອງເບ້ຍໄມ້ໃຫ້ໝາກ
4) ສົ່ງເສີມດ້ານການລ້ຽງສັດໃຫ້ແກ່ປະຊາຊົນ
3) ໃຫ້ການຝຶກຝົນອົບຮົມດ້ານສະຕະວະແພດ

ປະຊາກອນ

ລວມ ບ້ານຊາຍ ປະຊາກອນ

817

ເພດຍິງ **374**

ເພດຊາຍ **443**

ຄອບຄົວ

ຄອບຄົວທັງໝົດ	
ຄອບຄົວລາວລຸ່ມ	38
ຄອບຄົວເຜົ່າມົ້ງ	101
ແມ່ຮ້າງ	1
ພໍ່ຮ້າງ	1
ແມ່ໝ້າຍ	10
ພໍ່ໝ້າຍ	1
ຄອບຄົວທຸກຍາກ	2
ກຳພອຍ	1

ການປະກອບອາຊີບ

100%

ຊາວກະສິກອນ

- ເຮັດໄຮ່, ເຮັດນາ, ເຮັດສວນ ແລະ ລ້ຽງສັດ

ຄົນພິການ

ຄົນພິການທັງໝົດ **10** ຄົນ

- 2 ພິການສາຍຕາ
- 1 ພິການຫູ/ຄໍ
- 5 ພິການແຂນ/ຂາ
- 2 ພິການສະໝອງ

ສິ່ງອຳນວຍຄວາມສະດວກ

- ມີໂຮງຮຽນປະຖົມ ແລະ ມັດທະຍົມຕົ້ນ
- ມີໄຟຟ້າທີ່ສະດວກ
- ສະໂມສອນບ້ານ
- ມີສັນຍານໂທລະສັບ ສາມາດຕິດຕໍ່ກັບໂລກພາຍນອກໄດ້
- ມີຮ້ານຂາຍເຄື່ອງ
- ມີວັດ
- ມີປັ້ມນ້ຳມັນ

ຄົນພິການທັງໝົດ 10 ຄົນ

ຄົນພິການທີ່ເປັນບູລິມະສິດຂອງໂຄງການ 5 ຄົນ

- ຊື່
- ວັນເດືອນປີເກີດ
- ຄວາມພິການ
- ວຽກທີ່ຕ້ອງການເພື່ອສ້າງລາຍຮັບ
- ເຫດຜົນ
- ຈຸດດີ
- ຈຸດອ່ອນ
- ໂອກາດ
- ອຸປະສັກ
- ຜູ້ຫຼັກໃນການເຮັດກິດຈະກຳ

- ນາງ ໄມ ທໍ່
- 2010
- ເປັຍລ່ວຍຢ່າງບໍ່ໄດ້
- ຂາຍເຄື່ອງ
- ຜູ້ປົກຄອງສາມາດຢູ່ໃກ້ຊິດ ແລະ ເບິ່ງແຍງລູກໄດ້
- N/A
- N/A
- N/A
- N/A
- ແມ່

- ທ້າວ ຫຼ້ານ້ອຍ ແສງຄຳຢວງ
- 05/12/2005
- ສະໝອງພິການ
- ລ້ຽງງົວ, ໝູ, ເປັດ, ໄກ່
- ຜູ້ປົກຄອງມີເວລາເບິ່ງແຍງລູກ
- ມີເດີນຫຍ້າ, ມີແຮງງານ, ມີຄວກງົວ
- ຮ້ວບໍ່ດີ
- N/A
- N/A
- ພໍ່, ແມ່, ອ້າຍ

- ທ້າວ ຫົເລົ່ຳ ໄຊຊີລໍ
- 03/07/1982
- ມືຊ້າຍກຸດ
- ລ້ຽງສັດ, ງົວ
- ເມື່ອສັດມີລູກແລ້ວຈະໄດ້ຂາຍ
- ປ່ວຍຕາມທຳມະຊາດ
- ບໍ່ມີທຶນ, ບໍ່ຮູ້ວິທີລ້ຽງ
- ເປັນເຂດທີ່ສາມາດລ້ຽງງົວໄດ້
- ບໍ່ມີຄວາມຮູ້ໃນການລ້ຽງສັດ
- ຕົນເອງ

- ທ້າວ ເປັຍ (ແຫຼ້)
- 12/12/1960
- ເຄື່ອນໄຫວບໍ່ສະດວກ
- ລ້ຽງສັດ (ງົວ)
- ງົວສາມາດຫາກິນເອງຕາມ ທຳມະຊາດ
- ມີສະຖານທີ່, ເຄີຍລ້ຽງມາກ່ອນ
- ບໍ່ມີຄວາມຮູ້ໃນການລ້ຽງສັດ, ບໍ່ມີທຶນ
- ພື້ນທີ່ເໝາະແກ່ການລ້ຽງສັດ
- ເກີດພະຍາດລະບາດກັບສັດ
- ອ້າຍ ແລະ ຫຼານ

- ທ້າວ ຮ້ວລໍ
- 26/02/1987
- ດົ້ວຕີເບື້ອງຊ້າຍກຸດ 3 ດົ້ວ
- ລ້ຽງປາ, ລ້ຽງໄກ່
- ເພື່ອແກ້ໄຂຊີວິດປະຈຳວັນເພາະບໍ່ຢາກ ໄປເຮັດໄຮ່ ຮ່າງກາຍບໍ່ພ້ອມ
- ມີໝອງປາແລະມີໝ້ອຍຄົນລ້ຽງ
- ບໍ່ເຄີຍລ້ຽງມາກ່ອນ, ບໍ່ມີຄວາມຮູ້
- N/A
- ຢ້ານຄົນມາລັກເອົາປາຢູ່ໝອງ
- N/A

NOTE

ການຄັດເລືອກບູລິມະສິດແມ່ນ ອີງໃສ່ການປະເມີນ ແລະ ຄຳ ແນະນຳຂອງ ສະມາຄົມຄົນ ພິການແຫ່ງຊາດລາວ ແລະ ທ່າ ແຮງຂອງຄົນພິການ

ບົດບາດຍິງ-ຊາຍ

ກິດຈະວັດປະຈຳວັນ

ນອນ	7h	8h	ນອນ
ພັກຜ່ອນ	2h	3h	ພັກຜ່ອນ
ເຮັດວຽກເຮືອນ	6h	5h	ເຮັດວຽກເຮືອນ
ເຮັດວຽກ/ອອກແຮງງານ	9h	8h	ເຮັດວຽກ/ອອກແຮງງານ

ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ



ການເຂົ້າເຖິງ

- ສຳລັບການເຂົ້າເຖິງຊັບພະຍາກອນ ເຫັນວ່າຊັບສິນຫຼາຍຢ່າງແມ່ນທັງຍິງ ແລະ ຊາຍໄດ້ນຳໃຊ້ຮ່ວມກັນ
- ເນື່ອງຈາກມີການແບ່ງວຽກຍິງ-ຊາຍຢ່າງຊັດເຈນ ພາຫະນະໃຫຍ່ ເຊັ່ນ ລົດໃຫຍ່, ເຄື່ອງທຳການຜະລິດໜັກ ແມ່ນຜູ້ຊາຍເປັນຜູ້ຊົມໃຊ້

ການຄວບຄຸມ

- ສຳລັບການຄວບຄຸມ ແມ່ນເຫັນວ່າ ທັງຍິງ ແລະ ຊາຍ ຕ້ອງ ໄດ້ຕັດສິນໃຈ ຮ່ວມກັນ

- ສຳລັບການບໍລິຫານເງິນ ໂດຍທົ່ວໄປແລ້ວ ແມ່ຍິງ ເປັນ ຜູ້ກຳເງິນ ແລະ ແບ່ງ ໃຫ້ ຜູ້ ຊາ ຍ ໃ ຊ້ ໃ ນ ສິ່ ງ ຈຳ ເ ປັ ນ

ບັນຫາ ແລະ ສິ່ງທ້າທາຍ

- ຄວາມ ຫ ລຸ ດ ໂ ຕ ນ ໃ ນ ການ ເ ຮັ ດ ວ ຽ ກ ເ ຮັ ດ ໃ ຫ້ ແ ມ່ ຍິ ງ ບໍ່ ມີ ເ ວ ລາ ເ ບິ່ ງ ແ ຍ ງ ແ ລ ະ ພັ ດ ທ ະ ນ າ ຕົ ນ ເ ອ ງ ເ ທົ່ າ ທີ່ ຄ ວ ນ
- ແ ມ່ ຍິ ງ ມີ ຄ ວ າ ມ ທ້ າ ທ າ ນ ຕ່ ຳ ໃ ນ ການ ສ ະ ແ ດ ງ ອ ອ ກ ສ ິ ນ ທ ະ ນ າ ແ ລ ະ ປ ະ ກ ອ ບ ຄ ຳ ຄ ິ ດ ຄ ຳ ເ ຫ ັ ນ

ຂໍ້ສະເໜີ

- ກຸ່ ມ ແ ມ່ ຍິ ງ ຢ າ ກ ໃ ຫ້ ຜ ູ້ ຊ າ ຍ ຊ່ ວ ຍ ວ ຽ ກ ຕ່ າ ງ ເ ຊັ່ ນ ແ ຕ່ ງ ກ ິ ນ , ໄ ປ ຕ ັ ກ ນ ້ ຳ , ເ ອ ົ າ ລ ູ ກ , ແ ລ ະ ກ ວ າ ດ ເ ຮ ື ອ ນ
- ຈ ັ ດ ຝ ຶ ກ ອ ົ ບ ຮ ົ ມ ບ ົ ດ ບ າ ດ ຍ ິ ງ ຊ າ ຍ ໃ ຫ ້ ແ ກ່ ຊ ຸ ມ ຊ ົ ນ

ການປູກຝັງ

ລວມ ບ້ານຊາຍ ເນື້ອທີ່ທຳການຜະລິດ

33,68 ເຮັກຕາ	18.5 ເຮັກຕາ	- ເຮັກຕາ
ນາ	ໄຮ່ໝູນວຽນ	ສວນ

ນາ ແມ່ນນຳໃຊ້ນ້ຳຝົນ
ໄຮ່ ແມ່ນນຳໃຊ້ນ້ຳຝົນ
ສວນ ແມ່ນນຳໃຊ້ນ້ຳຜາຍ, ນ້ຳຝົນ

ເດືອນທີ່ເໝາະສົມແກ່ການປູກພືດ

ຜະລິດຕະພັນ	ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ
ເຂົ້ານາ-ເຂົ້າໄຮ່												
ໄມ້ໃຫ້ໝາກ												
ພືດຜັກ												

ບັນຫາໃນການປູກພືດ

ເຂົ້ານາ	ເຂົ້າໄຮ່	ພືດສວນຄົວ	ພືດອຸດສາຫະກຳ
ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ	ສັດຕູພືດທຳລາຍ
ພະຍາດລະບາດ	ພະຍາດລະບາດ		
ນ້ຳບໍ່ພຽງພໍ			
ໄພທຳມະຊາດ			

ການບໍລິໂພກ

• ເຂົ້າ ແລະ ພືດຜັກທີ່ຊາວບ້ານກິນຢູ່ທຸກວັນນີ້ສ່ວນໃຫຍ່ມາຈາກການປູກກິນເອງ ແລະ ຊື້ກິນ

ເຕັກນິກການປູກພືດ

ທີ່ຜ່ານມາເຫັນວ່າປະຊາຊົນມີການນຳໃຊ້ຝຸ່ນທຳມະຊາດ ປະສົມປະສານກັບການນຳໃຊ້ຝຸ່ນເຄມີເຂົ້າໃນການຜະລິດ

ການປູກຝັງ

ສັງລວມບັນຫາຂອງການປູກຝັງ

- ມີພະຍາດລະບາດທຳລາຍ ຜົນລະປູກ
- ມີສັດສັດຕູພືດທຳລາຍຜົນລະປູກ
- ຂາດກຸ່ມຄອງການຜະລິດແບບ ເປັນກ້ອນກຸ່ມ
- ຂາດເຕັກນິກໃນການປູກພືດ ໂດຍ ສະເພາະການປູກຜັກໃນລະດູຝົນ
- ຂາດເຕັກນິກການຕະຫຼາດ
- ເສັ້ນທາງບໍ່ສະດວກ

ຂໍ້ສະເໜີ

- ຈັດເຝິກອົບຮົມວິທີການປ້ອງກັນ ແລະ ຮັບມືກັບໄພ ທຳມະຊາດ
- ຝຶກອົບຮົມເຕັກນິກການປູກ, ເຮັດຝຸ່ນບົ່ມ, ຝຸ່ນ ຊີວະພາບ ແລະ ຝຶກອົບຮົມວິທີຜະລິດຢາຂັບໄລ່ ແມງໄມ້ ແລະ ຢາປາບສັດຕູພືດແບບຊີວະພາບ
- ເຝິກອົບຮົມເຕັກນິກການປູກພືດໃນລະດູຝົນ (ເຮືອນຮົ່ມ) ແລະ ການຂະຫຍາຍຕົ້ນໝາກໄມ້ ພ້ອມ ທັງສະໜອງອຸປະກອນ ໂດຍຄຳນຶງເຖິງສິ່ງທ້າທາຍ ຕ່າງໆ
- ເຝິກອົບຮົມ ແລະ ຈັດຕັ້ງກຸ່ມກະສິກຳ
- ກຳນົດຕະຫຼາດຈຳໜ່າຍ, ເຊື່ອມຕໍ່ກຸ່ມກະສິກຳກັບ ຕະຫຼາດຈຳໜ່າຍ ແລະ ເຝິກອົບຮົມດ້ານການຕະຫຼາດ ໃຫ້ປະຊາຊົນ

ການລ້ຽງສັດ

ຈຳນວນສັດພາຍໃນບ້ານ



ເນື້ອທີ່ການລ້ຽງສັດ

- ດິນຄັງລວມບ້ານ 201,9 ຮຕ

ພາຍໃນບ້ານບໍ່ມີສັດຕະວະແພດປະຈຳບ້ານ ແລະ ທີ່ຜ່ານມາສັດລ້ຽງຂອງຊາວບ້ານແມ່ນບໍ່ເຄີຍໄດ້ຮັບການຊັກຢາປ້ອງກັນພະຍາດມາກ່ອນ

ເດືອນທີ່ເໝາະສົມໃນການລ້ຽງສັດ

ສັດ	ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ
ງົວ												
ຄວາຍ												
ແບ້												
ປາ												
ເປັດ-ໄກ່												
ໝູ												

ເຕັກນິກ ແລະ ບັນຫາໃນການລ້ຽງສັດ

	ເຕັກນິກ	ບັນຫາ
ງົວ, ຄວາຍ	ລ້ຽງແບບປ່ອຍຫາກິນຕາມທຳມະຊາດ, ລຽງໃສ່ຄັງລວມບ້ານ, ລ້ຽງໃສ່ຄັງສວນໂຕ, ລະດູຝົນປ່ອຍເຂົ້າຄັງ, ລະດູແລ້ງປ່ອຍອອກຫາກິນຕາມທຳມະຊາດ	ງົວຄວາມຕາຍ, ທົ່ງຫຍ້າມີຈຳນວນຈຳກັດ, ຫຍ້າບໍ່ພຽງພໍ, ບໍ່ມີຄວາມຮູ້ດ້ານສັດຕະວະແພດ
ໝູ	ລ້ຽງແບບຂັງໃສ່ຄອກ	ໝູຕາຍ, ຢາປ້ວພະຍາດສັດມີຈຳກັດ
ປາ	ລ້ຽງໃສ່ໝອງດິນໃຫ້ປາຫາກິນຕາມທຳມະຊາດ	ປາມີການຈະເລີນເຕີບໂຕຊ້າ, ໄພທຳມະຊາດທຳລາຍໝອງປາ

ການສັດລ້ຽງ

ສິ່ງລວມຂໍ້ສະດວກ ແລະ ເງື່ອນໄຂໃນການລ້ຽງສັດ

- ມີເນື້ອທີ່ພຽງພໍ ແລະ ເໝາະສົມ ໃນການລ້ຽງສັດທຸກຊະນິດ
- ມີທົ່ງຫຍ້າທຳມະຊາດເພື່ອ ຮັບຮອງ ແລະ ບັນເທົາທາງດ້ານ ອາຫານສັດໃນລະດູແລ້ງ

- ມີແຫຼ່ງນ້ຳ, ຫ້ວຍນ້ຳ ຕະຫຼອດປີ.

ສິ່ງລວມບັນຫາ ແລະ ຂໍ້ຫຍຸ້ງຍາກ

- ພະຍາດມັກເກີດຂຶ້ນກັບສັດລ້ຽງ ໃນທຸກໆປີ.

- ປະຊາຊົນບາງຄອບຄົວບໍ່ມີຕົ້ນ ທຶນໃນການລ້ຽງ

- ແຫຼ່ງອາຫານມີຈຳກັດ

- ຄວາມຮູ້ທາງດ້ານເຕັກນິກການ ລ້ຽງສັດຍັງຕ່ຳ ແລະ ບໍ່ສາມາດ ຜະລິດເປັນສິນຄ້າໄດ້
- ປະຊາຊົນຍັງຂາດຄວາມເອົາໃຈ ໃສ່ໃນການເບິ່ງແຍງສັດລ້ຽງຂອງ ຕົນ ໂດຍສະເພາະເລື່ອງສຸຂະພາບ ສັດ
- ຂາດເຕັກນິກດ້ານສັດຕະແພດ

ຂໍ້ສະເໜີ

- ເຝິກອົບຮົມການດູແລສຸຂະພາບສັດ, ເຝິກອົບຮົມ ສັດຕະວະແພດ, ສັກຢາປ້ອງກັນສັດຕາມເວລາທີ່ ກຳນົດ ແລະ ຕໍ່ເນື່ອງ.
- ຂັ້ນບ້ານຄວນກຳນົດລະບຽບການຄຸ້ມຄອງສັດຂັ້ນ ບ້ານ
- ສະໜອງສັດ ແລະ ແກ່ນຫຍ້າໃຫ້ຄອບຄົວທຸກຍາກ.
- ເຝິກອົບຮົມເຕັກນິກການລ້ຽງສັດ, ການຄຸ້ມຄອງສວນ ຫຍ້າ ແລະ ຈັດຕັ້ງກຸ່ມລ້ຽງສັດ
- ຈຳກັດບໍ່ໃຫ້ເຄື່ອນຍ້າຍສັດເຂົ້າ-ອອກໃນເວລາສັດ ເປັນພະຍາດ.

ລາຄາສິນຄ້າພາຍໃນບ້ານ

ລາຄາຜົນລະປູກ

ເຂົ້າເປືອກ
4,500
ກີບ/ກິໂລ

ຫົວສີໄຄ
5,000
ກີບ/ກິໂລ

ໝາກກ້ຽງ
10,000
ກີບ/ກິໂລ

ໝາກເຜັດດິບ
10,000
ກີບ/ກິໂລ

ໝາກໝັ້ນ
5,000
ກີບ/ກິໂລ

ຜັກກາດ
60,000
ກີບ/ໝື່ນ

ສາລີ
800
ກີບ/ກິໂລ

ໝາກແຕງ
20,000
ກີບ/ໝື່ນ

ໝາກເຜັດແຫ້ງ
25,000
ກີບ/ກິໂລ

ຫອມປ້ອມ
5,000
ກີບ/ກິໂລ

ເຂົ້າສານ
6,500
ກີບ/ກິໂລ

ຜັກທຽມ
10,000
ກີບ/ກິໂລ

ຖົ່ວດິນ
15,000
ກີບ/ກິໂລ

ໝາກເຂືອ
7,000
ກີບ/ກິໂລ

ລາຄາສັດ ແລະ ຊີ້ນສັດ

ງົວ
4,500,000
ກີບ/ໂຕ

ໝູນ້ອຍ
300,000
ກີບ/ໂຕ



ເປັດ-ໄກ່
50,000
ກີບ/ໂຕ

ຊີ້ນງົວ
40-50,000
ກີບ/ກິໂລ

ຊີ້ນໝູ
35,000
ກີບ/ກິໂລ

ຊີ້ນໄກ່
35,000
ກີບ/ກິໂລ

ປາເກັດລ້ຽງ
20,000
ກີບ/ໂຕ

ປາໜັງທຳມະຊາດ
8,000
ກີບ/ກິໂລ

ປາເກັດທຳມະຊາດ
25,000
ກີບ/ກິໂລ

ການຜະລິດປ້ອນຕະຫຼາດ

ເຂົ້າ	15 ໂຕນ/ປີ	ສາລີ	107 ໂຕນ/ປີ	ເປັດ	100 ກິໂລ/ປີ
ສາລີ	107 ໂຕນ/ປີ	ໝູ	10 ໂຕ/ປີ	ໄກ່	100 ກິໂລ/ປີ
ງົວ-ຄວາຍ	10 ໂຕ/ປີ	ປາ	200 ກິໂລ/ປີ		